# ມີຊາທວນຄືນການຮ່ວມມື ລາວ-ຈີນ ໃນປີ 2024 ດ້ວຍ 7 ຄຳສັບເດັ່ນ



ປີ 2024 ທີ່ຫາກໍ່ຜ່ານພົ້ນໄປ ເປັນປີເປີດການປະຕິບັດ “ແຜນແມ່ບົດແຫ່ງການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ (ປີ 2024 – 2028)”. ໃນປີ 2024, ພາຍໃຕ້ການຊີ້ນຳ - ນຳພາ ທາງຍຸດທະສາດຂອງຜູ້ນຳສູງສຸດສອງພັກ ແລະ ສອງປະເທດ, ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ໄດ້ຂະຫຍາຍລົງສູ່ລວງເລິກຢ່າງໜັກແໜ້ນ ເຊິ່ງໄດ້ນຳເອົາຜົນປະໂຫຍດຕົວຈິງມາໃຫ້ປະຊາຊົນສອງຊາດ ແລະ ເປັນຕົວແບບອັນຕັ້ງໜ້າ ແຫ່ງການສ້າງປະຊາຄົມຮ່ວມຊາຕາກຳຂອງມວນມະນຸດ. ພາກນີ້, ພວກເຮົາຈະພາທ່ານທວນຄືນການຮ່ວມມື ລາວ-ຈີນ ໃນປີ 2024 ດ້ວຍ 7 ຄຳສັບເດັ່ນ.

## 1 ຄວາມເຫັນທີ່ເປັນເອກະພາບກັນ

ວັນທີ 22 ຕຸລາ 2024, ຢູ່ນະຄອນກາຊານປະເທດຣັດເຊຍ, ສະຫາຍ ສີຈິ້ນຜິງ ເລຂາທິການໃຫຍ່ ຄະນະກຳມະການສູນກາງພັກກອມມູນິດຈີນ ປະທານປະເທດ ແຫ່ງ ສປ ຈີນ ໄດ້ພົບປະກັບ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ປະທານປະເທດ ແຫ່ງ ສປປ ລາວ, ສອງຝ່າຍ ໄດ້ລົງເລິກແລກປ່ຽນຄວາມເຫັນ ກ່ຽວກັບການຊຸກຍູ້ການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ຂະຫຍາຍລົງສູ່ລວງເລິກຢ່າງໜັກແໜ້ນ ແລະ ຕໍ່ເນື່ອງ.

ໃນລະຫວ່າງ ວັນທີ 11-12 11 ຫາ 12 ຕຸລາ 2024, ໂດຍຕອບສະໜອງຕາມຄຳເຊີນຂອງ ສະຫາຍ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ, ສະຫາຍ ຫຼີສຽງ ນາຍົກລັດຖະມົນຕີ ແຫ່ງ ສປ ຈີນ ໄດ້ເດີນທາງໄປຢ້ຽມຢາມ ສປປ ລາວ ຢ່າງເປັນທາງການ. ໃນໄລຍະການຢ້ຽມຢາມ, ສະຫາຍ ຫຼີສຽງ ໄດ້ເຂົ້າຢ້ຽມ ຂໍ່ານັບ ສະຫາຍ ທອງລຸນ ສີສຸລິດ ເລຂາທິການໃຫຍ່ ຄະນບໍລິຫານງານສູນກາງພັກປະຊາຊົນ ປະຕິວັດລາວ ປະທານປະເທດ ແຫ່ງ ສປປ ລາວ, ໄດ້ພົບປະກັບ ສະຫາຍ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ແລະ ພົບປະກັບ ສະຫາຍ ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດແຫ່ງ ສປປ ລາວ. ສອງຝ່າຍ ໄດ້ລົງເລິກແລກປ່ຽນຄວາມເຫັນກ່ຽວກັບການລົງເລິກການສ້າງຄູ່ຮ່ວມຊາຕາກຳ ລາວ-ຈີນ ພາຍໃຕ້ສະຖານະການໃໝ່ ແລະ ບັນຫາສາກົນ ແລະ ພາກພື້ນ ທີ່ສອງຝ່າຍສົນໃຈຮ່ວມກັນ ໂດຍໄດ້ ມີຄວາມເຫັນທີ່ເປັນເອກະພາບກັນ ຢ່າງກວ້າງຂວາງ ພ້ອມທັງໄດ້ເຜີຍແຜ່ “ຖະແຫຼງການຮ່ວມ ລະຫວ່າງ ສປປ ລາວ ແລະ ສປ ຈີນ”.

## 2 ພະລັງງານໄຟຟ້າ

ວັນທີ 29 ມັງກອນ 2024, ບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວຈຳກັດ ໄດ້ເປີດນຳໃຊ້ຢ່າງເປັນທາງການ. ໃນຖານະເປັນບໍລິສັດທີ່ຮັບຜິດຊອບການບໍລິຫານງານຕາຂ່າຍໄຟຟ້າລະດັບຊາດຂອງລາວ, ບໍລິສັດສາຍສົ່ງໄຟຟ້າແຫ່ງຊາດລາວ ຈຳກັດ ຮັບຜິດຊອບການລົງທຶນ, ສ້າງສາ ແລະ ບໍລິຫານງານໂຄງການຕາຂ່າຍໄຟຟ້າລະດັບ 230 ກິໂລໂວນຂຶ້ນໄປ ແລະ ໂຄງການເຊື່ອມຕໍ່ຕາຂ່າຍໄຟຟ້າກັບປະເທດອ້ອມຂ້າງ ເຊິ່ງມີຈຸດປະສົງໃຫ້ການບໍລິການສົ່ງໄຟຟ້າ ທີ່ປອດໄພ, ໝັ້ນທ່ຽງ ແລະ ຕໍ່ເນື່ອງໃຫ້ແກ່ທົ່ວປະເທດລາວ. ບໍລິສັດດັ່ງກ່າວ ແມ່ນບໍລິສັດຕາຂ່າຍໄຟຟ້າພາກໃຕ້ຈີນ ແລະ ລັດວິສາຫະກິດໄຟຟ້າລາວ ຮ່ວມກັນລົງທຶນສ້າງຕັ້ງຂຶ້ນ.

ວັນທີ 18 ທັນວາ 2024, ໂຄງການພະລັງງານແສງຕາເວັນ 1 ລ້ານກິໂລໂວນ ໄລຍະໜຶ່ງຂອງສູນພະລັງງານສະອາດ ທາງພາກເໜືອປະເທດລາວຂອງບໍລິສັດ CGN ຂອງຈີນ ໄດ້ລົງມືກໍ່ສ້າງຢ່າງເປັນທາງການ ເຊິ່ງແມ່ນໂຄງການພະລັງງານແສງຕາເວັນຂະໜາດໃຫຍ່ ໂຄງການທຳອິດຂອງລາວ.

## 3 ວີຊາ

ປີ 2024 ເປັນປີທ່ອງທ່ຽວລາວ. ເພື່ອດຶງດູດນັກທ່ອງທ່ຽວຈີນ ໄປທ່ຽວລາວນັບມື້ນັບຫຼາຍຂຶ້ນ, ວັນທີ 26 ມິຖຸນາ 2024, ຝ່າຍລາວ ໄດ້ປະກາດນະໂຍບາຍຍົກເວັ້ນວີຊາ ເປັນເວລາ 15 ວັນ ສໍາລັບຄະນະນັກທ່ອງທ່ຽວແຜ່ນດິນໃຫຍ່ຈີນ, ຮົງກົງ, ມາກາວ ແລະ ໄຕ້ຫວັນ (ຈີນ) ທີ່ຖືໜັງສືຜ່ານແດນ ທົ່ວໄປ ທີ່ຈັດສັນຄະນະໂດຍບໍລິສັດທ່ອງທ່ຽວລາວ.

ວັນທີ 7 ພະຈິກ 2024, ຈີນ ໄດ້ປະກາດນໍາໃຊ້ “ວີຊາລ້ານຊ້າງ-ແມ່ຂອງ” ທີ່ສາມາດເດີນທາງເຂົ້າ-ອອກປະເທດຈີນ ໄດ້ຫຼາຍເທື່ອເປັນໄລຍະ 5 ປີ ໃຫ້ແກ່ນັກທຸລະກິດ ທີ່ໄດ້ຕາມເງື່ອນໄຂຂອງ 5 ປະເທດ ຕາມລຳແມ່ນ້ຳຂອງ ເຊິ່ງລວມທັງລາວ.













## 4 ເມືອງແຮກສ່ຽວ

ວັນທີ 19 ພະຈິກ 2024, ເນື່ອງໃນໂອກາດຈັດກອງປະຊຸມເມືອງແຮກສ່ຽວສາກົນຈີນ ປີ 2024 ຢູ່ນະຄອນຄຸນໝິງ, ສະຫະພັນຕົວເມືອງທາງລົດໄຟຈີນ-ລາວ ທີ່ນະຄອນຄຸນໝິງຂອງຈີນ ແລະ ນະຄອນຫຼວງວຽງຈັນຂອງລາວ ໄດ້ສ້າງຕັ້ງຂຶ້ນຢູ່ນະຄອນຄຸນໝິງ. ຕົວເມືອງສະມາຊິກສະຫະພັນປະກອບມີ ນະຄອນຢູ້ຊີ, ນະຄອນຜູເອີ, ກິ່ງແຂວງສິບສອງພັນນາ, ນະຄອນເສິງຕູ, ນະຄອນຈຸ່ງກິ່ງ ແລະ ນະຄອນອູລຸມກີຂອງຈີນ ແລະ ແຂວງຫຼວງນ້ຳທ່າ ແລະ ນະຄອນຫຼວງພະບາງຂອງລາວ. ນີ້ແມ່ນອີກມາດຕະການໜຶ່ງ ທີ່ເພີ່ມທະວີສາຍພົວພັນມິດຕະພາບລະຫວ່າງ ຕົວເມືອງຕ່າງໆຂອງຈີນ ແລະ ລາວ ນັບແຕ່ນະຄອນຄຸນໝິງແລະນະຄອນຫຼວງວຽງຈັນໄດ້ສ້າງຕັ້ງສາຍພົວພັນເມືອງແຮກສ່ຽວໃນປີ 2011.

## 5 ການເປີດນຳໃຊ້ທາງລົດໄຟ ຈີນ-ລາວ ຄົບຮອບ 3 ປີ

ວັນທີ 3 ທັນວາ 2024, ການເປີດນຳໃຊ້ທາງລົດໄຟ ຈີນ-ລາວ ຄົບຮອບ 3 ປີ. 3 ປີຜ່ານມາ, ທາງລົດໄຟ ຈີນ-ລາວ ໄດ້ຂົນສົ່ງຜູ້ໂດຍສານ ທັງໝົດ 43 ລ້ານເທື່ອຄົນ ແລະ ຂົນສົ່ງສິນຄ້າ ຫຼາຍກວ່າ 48 ລ້ານໂຕນ. ໃນນັ້ນ, ສິນຄ້າຂ້າມຊາດມີຫຼາຍກວ່າ 10,6 ລ້ານໂຕນ. ນອກນີ້, ໃນປີ 2024, ທາງລົດໄຟ ຈີນ-ລາວ ໄດ້ຂົນສົ່ງສິນຄ້າ 19,6 ລ້ານໂຕນ. ໃນນັ້ນ, ສິນຄ້າຂ້າມຊາດ 4,78 ລ້ານໂຕນ ໂດຍໄດ້ຂົນສົ່ງສິນຄ້າຂ້າມຊາດໄປເຖິງ 19 ປະເທດ ເຊັ່ນ: ລາວ, ໄທ, ສິງກະໂປ ແລະ ອື່ນໆ.

ນັບແຕ່ການເປີດຂະບວນລົດໄຟໂດຍສານສາກົນ ຕາມທາງລົດໄຟ ຈີນ-ລາວ ແຕ່ວັນທີ 13 ເມສາ ປີ 2023 ເປັນຕົ້ນມາ, ທາງລົດໄຟ ຈີນ-ລາວ ໄດ້ຂົນສົ່ງຜູ້ໂດຍສານຂ້າມຊາດທັງໝົດເກືອບ 4 ແສນ ເທື່ອຄົນ. ວັນທີ 13 ເມສາ 2024, ວາລະສານຈຳປາ ເປັນສິ່ງພິມໃຫ້ອ່ານຢູ່ຕາມທາງລົດໄຟ.

## 6 ໂຄງການ ທີ່ຈີນຊ່ວຍເຫຼືອລາວ

ວັນທີ 20 ພຶດສະພາ 2024, ພິທີມອບ-ຮັບ ໂຄງການວິທະຍາໄລເຕັກນິກໄປສະນີລາວ ທີ່ກຸ່ມບໍລິສັດກໍ່ສ້າງທາງລົດໄຟຈີນ ຊ່ວຍເຫຼືອກໍ່ສ້າງ ໄດ້ຈັດຂຶ້ນຢູ່ນະຄອນຫຼວງວຽງຈັນ. ວິທະຍາໄລແຫ່ງນີ້ ເປັນໜຶ່ງໃນ 10 ວິທະຍາໄລ ທີ່ຈີນຊ່ວຍເຫຼືອລາວ ເຊິ່ງໄດ້ສ່ອງແສງໃຫ້ເຫັນເຖິງການຮ່ວມມືມິດຕະພາບ ລະຫວ່າງ ຈີນ-ລາວ ແລະ ສອງປະເທດ ຮ່ວມກັນຊຸກຍູ້ການຫັນເປັນຄວາມທັນສະໄໝ.

ວັນທີ 16 ສິງຫາ 2024, ໂຄງການສ້ອມແປງ ແລະ ຍົກລະດັບໂຮງໝໍຫຼວງພະບາງ ທີ່ຈີນຊ່ວຍເຫຼືອລາວ ໄດ້ສຳເລັດ ແລະ ເປີດນຳໃຊ້ຢ່າງເປັນທາງການ ພ້ອມທັງໄດ້ມອບໃຫ້ຝ່າຍລາວ. ໂຄງການດັ່ງກ່າວເປັນໂຄງການຄົບຊຸດ ຊ່ວຍເຫຼືອຕ່າງປະເທດລະດັບຊາດຂອງຈີນ ທີ່ກະຊວງການຄ້າຈີນ ມອບໝາຍໃຫ້ແຂວງຢຸນນານ ປະຕິບັດຕົວຈິງ. ພາຍຫຼັງໂຄງການດັ່ງກ່າວ ໄດ້ສຳເລັດ ໄດ້ຍົກລະດັບລະບົບຮາດແວ ແລະ ຊອບແວຂອງໂຮງໝໍ ໃຫ້ສູງຂຶ້ນ, ຄວາມສາມາດດ້ານການແພດ ແລະ ການປິ່ນປົວພະຍາດຂອງໂຮງໝໍ ກໍຖືກຍົກສູງຂຶ້ນເຊັ່ນດຽວກັນ, ປະຊາຊົນທ້ອງຖິ່ນ ຈະບໍ່ຈຳເປັນເດີນທາງໄກໄປປິ່ນປົວພະຍາດຢູ່ນະຄອນຫຼວງວຽງຈັນ ຫຼື ຕ່າງປະເທດ ຄືແຕ່ກ່ອນອີກແລ້ວ ເຊິ່ງໄດ້ຫຼຸດຄ່າເດີນທາງ ແລະ ຄ່າປິ່ນປົວຂອງຄົນເຈັບໃຫ້ໜ້ອຍລົງຢ່າງຫຼວງຫຼາຍ.

## 7 ງານຕະຫຼາດນັດສ່ຽວສາກົນ

ໃນລະຫວ່າງ ວັນທີ 20-22 ມິຖຸນາ ປີ 2024, ງານພົບປະສ້າງ ສັນຂະໜາດໃຫຍ່ ລະຫວ່າງປະຊາຊົນເຂດຊາຍແດນ ຈີນ-ລາວ ກໍຄືເທດສະການທ່ອງທ່ຽວວັດທະນະທຳປ່າຝົນເຂດຮ້ອນ ຄັ້ງປະຖົມມະເລີກ ໄດ້ຈັດຂຶ້ນຢູ່ເມືອງຫຼ້າ ກິ່ງແຂວງສິບສອງພັນນາ ແຂວງຢຸນນານ ສປ ຈີນ ໂດຍໄດ້ຈັດກິດຈະກຳຕ່າງໆ ເຊັ່ນ: ພິທີລວມສູນເຊັນສັນຍາ, ພິທີບໍລິຈາກ, ພິທີເປີດງານ, ງານຕະຫຼາດນັດໃຫຍ່ “ສ່ຽວສາກົນ” ລະຫວ່າງປະຊາຊົນເຂດຊາຍແດນ ຈີນ-ລາວ, ການແຂ່ງຂັນເຕະບານມິດຕະພາບສາກົນແມ່ນ້ຳລ້ານຊ້າງ-ແມ່ນ້ຳຂອງ ແລະ ອື່ນໆ ເຊິ່ງໄດ້ສ່ອງແສງໃຫ້ເຫັນເຖິງມິດຕະພາບ ແລະ ຜົນການຮ່ວມມືຢູ່ເຂດຊາຍແດນ ຈີນ-ລາວ.

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ ແຂວງຢຸນນານ)

ynzhanba@163.com
laos.yunnangateway.com